ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 40 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 ກັນຍາ 2016

ສຳນັກງານ ຄຄຊ
ເລກທີ 0962
ວັນທີ 03 OCT 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 19-23/09/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິລະບຽບວິໄນຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມຫຼັກການລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ 0,07% ເມື່ອທຽບໃສ່ເງິນເອີໂຣ ແລະ ແຂງຄ່າຂຶ້ນເມື່ອທຽບກັບຫຼາຍສະກຸນເງິນຂອງພາກພື້ນ, ຍ້ອນເສດຖະກິດຂອງສະຫະລັດມີທ່າອ່ຽງດີຂຶ້ນ ເຫັນໄດ້ຈາກຕົວເລກຈຳນວນຜູ້ຂໍສະຫວັດດີການວ່າງງານຫຼຸດລົງຈາກ 260.000 ຄົນ ມາເປັນ 252.000 ຄົນໃນເດືອນ 09/2016.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19/08/2016 | ອາທິດນີ້ 23/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1222 | 1,1214 | 0,07% |
| ໂດລາ/ເຢນ | 101,94 | 100,91 | 1,02% |
| ໂດລາ/ບາດ | 34,900 | 34,640 | 0,75% |
| ໂດລາ/ເປໂຊ | 47,82 | 48,04 | -0,45% |
| ໂດລາ/ຣູເປັຍ | 13.155 | 13.075 | 0,61% |
| ໂດລາ/ໂດລາສິງກະໂປ | 1,3640 | 1,3574 | 0,49% |
| ໂດລາ/ຢວນ | 6,6707 | 6,6697 | 0,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 5,59% ຈາກ 45,97 ໂດລາ/ບາເຣວ ມາເປັນ 48,57 ໂດລາ/ບາເຣວ ພາຍຫຼັງສຳນັກງານດ້ານພະລັງງານຂອງສະຫະລັດ (EIA) ລາຍງານຕົວເລກປະລິມານນ້ຳມັນໃນຄັງ ຫຼຸດລົງ 6,2 ລ້ານບາເຣວ ມາຢູ່ທີ່ລະດັບ 504,6 ລ້ານບາເຣວ ໃນອາທິດຜ່ານມາບວກກັບກຸ່ມປະເທດຜູ້ຜະລິດນ້ຳມັນມີແນວໂນ້ມຈະປັບປະລິມານການສົ່ງອອກນ້ຳມັນເພີ່ມຂຶ້ນ. ສຳລັບລາຄາຄຳເພີ່ມຂຶ້ນ 1,81% ເປັນ 1.336,66 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,07% ສຳລັບອັດຕາ ທທກ ອ່ອນຄ່າລົງ 2,27% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າ 0,36% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 2,67% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,58% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,53% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,64% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 4,43% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 19/09/2016 | | | ອາທິດນີ້ 23/09/2016 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.088,77 | 8.115,96 | 8.100,25 | 8.096,97 | 8.122,14 | 8.106,21 | -0,10% | -0,08% | -0,07% |
| ບາດ | 232,52 | 233,80 | 233,65 | 233,68 | 235,25 | 234,49 | -0,49% | -0,61% | -0,36% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.125,00 | 8.153,20 | 8.139,10 | 8.316,67 | 8.340,00 | 8.328,33 | -2,30% | -2,24% | -2,27% |
| ບາດ | 232,78 | 233,68 | 233,23 | 238,67 | 240,33 | 239,50 | -2,47% | -2,77% | -2,62% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,45% | 0,46% | 0,48% | 2,71% | 2,68% | 2,74% | | | |
| ບາດ | 0,11% | -0,05% | -0,18% | 2,13% | 2,16% | 2,14% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,76% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 0,84%;

- ປະລິມານເງິນ M2 ຫຼຸດລົງ 0,03% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,73%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (ວັນທີ 19-23/09/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 16,27 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ **60,54** ລ້ານໂດລາ ແລະ ຂາຍໂດລາໄດ້ **27,99** ລ້ານໂດລາ) ແລະ ຂາຍເງິນບາດສຸດທິ **914,34** ລ້ານບາດ (ໃນນີ້ ຊື້ບາດໄດ້

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

434,30 ລ້ານບາດ ແລະ ຂາຍບາດໄດ້ 1.348,64 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 15,48% ແລະ ເພີ່ມຂຶ້ນ 26,45% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈໍານວນ 5,00 ລ້ານໂດລ້ານ ແລະ ຊື້ເງິນບາດສຸດທິ 76,21 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 5,55 ລ້ານໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 80,13 ລ້ານໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 19/09/2016 | | ອາທິດທີ 23/09/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **59,06** | **427,74** | **60,54** | **434,30** | **2,51%** | **1,53%** |
| - ທ/ຄທຸລະກິດລັດ | 11,24 | 88,45 | 9,57 | 99,35 | -14,86% | 12,32% |
| - ທ/ຄທຸລະກິດອື່ນໆ | 47,82 | 339,29 | 50,97 | 334,95 | 6,59% | -1,28% |
| 2. ການຂາຍເງິນຕາຕ່າງປະເທດ | **45,68** | **982,24** | **27,99** | **1.348,64** | **-38,73%** | **37,30%** |
| - ທ/ຄທຸລະກິດລັດ | 10,75 | 136,21 | 11,72 | 136,70 | 9,02% | 0,36% |
| - ທ/ຄທຸລະກິດອື່ນໆ | 34,93 | 846,03 | 16,27 | 1.211,94 | -53,42% | 43,25% |
| ຊື້-ຂາຍສຸດທິ ທທກ | **13,38** | **-554,50** | **32,55** | **-914,34** | **143,27%** | **64,89%** |
| - ຜິດດ່ຽງ ຊື້-ຂາຍ | 22,65% | -129,63% | 53,77% | -210,53% | 137,33% | 62,40% |
| - ມູນຄ່າການຊື້-ຂາຍ | **104,74** | **1.409,98** | **88,53** | **1.782,94** | **-15,48%** | **26,45%** |
| 3. ການຊື້ຂາຍລະຫວ່າງ ທຫລ ກັບ ທທກ | **-5,46** | **0,00** | **-5,55** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 3,50 | 0,00 | 14,50 | | |
| - ທຫລ ຂາຍໃຫ້ ທທກ | 5,46 | 3,50 | 5,55 | 14,50 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,63** | **52,09** | **5,00** | **76,21** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-0,46** | 0,00 | **80,13** | 0,00 | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,08 | 0,00 | 80,15 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,55 | 0,00 | 0,02 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 09/2016 ຢູ່ໃນລະດັບ 1,90% ຫຼຸດລົງຈາກ 1,97% ໃນເດືອນ 07/2016.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນໍາໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກ ສປປ ລາວ ຈໍານວນ 48,32 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 68,4 % ເມື່ອທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 2.265 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 396 ສະບັບ ເທົ່າກັບ 61,77% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 396,54 ຕື້ກີບ ເພີ່ມຂຶ້ນ 28,35% ເມື່ອທຽບໃສ່ອາທິດຜ່ານມາ, (ຂໍ້ມູນນີ້ແມ່ນຂໍ້ມູນຂອງອາທິດທີ 05-09/09/2016), ສໍາລັບຂໍ້ມູນປະຈໍາອາທິດທີ 12-16 ແລະ ອາທິດທີ 19-23/08/2016 ແມ່ນຍັງບໍ່ໄດ້ຮັບຂໍ້ມູນ.

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (19-23/09/2016) ມີຈໍານວນ 2.066 ຄັ້ງ ໂດຍມີມູນຄ່າ 902,35 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 533 ຄັ້ງ.

### 2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 965,07 ຈຸດ ຫຼຸດລົງ 1,47% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 56.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 276,38 ລ້ານກີບ ຫຼຸດລົງ 52,25% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 67,57% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.879 ກີບ/ຮຸ້ນ ເພີ່ມຂຶ້ນ 102 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 14.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 71,23 ລ້ານກີບ ເພີ່ມຂຶ້ນ 73,61% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 64,41% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,35%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.885 ກີບ/ຮຸ້ນ ຫຼຸດລົງ 30 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 42.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 205.15 ລ້ານກີບ ຫຼຸດລົງ 62,50% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 40,07% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.200 ກີບ ບໍ່ມີການປ່ຽນແປງເມື່ອທຽບກັບອາທິດຜ່ານມາ, ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ມີການປ່ຽນແປງເມື່ອທຽບກັບອາທິດຜ່ານມາ, ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດ: ❶ ເປັນປະທານກອງປະຊຸມຜ່ານຜົນການປະເມີນພະນັກງານປະກອບສ່ວນວຽກກອງປະຊຸມອາຊຽນ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 4 ທຫລ, ❷ ເປັນປະທານກອງປະຊຸມບັນຫາຂອງບໍລິສັດ PS ຫ້ອງປະຊຸມທ່ານຮອງຜູ້ວ່າການ ທຫລ;

- ສໍາເລັດການເຂົ້າຮ່ວມ: ❶ ກອງປະຊຸມຄະນະບໍລິຫານງານສູນກາງພັກ ທີ່ຫ້ອງປະຊຸມສູນກາງພັກຫຼັກ 6; ❷ ກອງປະຊຸມວຽກງານແຜນການ, ການເງິນ ແລະການກວດສອບ ທີ່ສະພາແຫ່ງຊາດ, ❸ ເຂົ້າຮ່ວມລາຍງານກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ສະໄໝສາມັນ ທີ່ສະພາແຫ່ງຊາດ;

- ສໍາເລັດການການຈັດກອງປະຊຸມປຶກສາຫາລືການມາເຮັດວຽກຂອງຄະນະວິຊາການ IMF ທີ່ມາປະເມີນສະພາບເສດຖະກິດມະຫາພາກຂອງ ສປປ ລາວ ຕາມມາດຕາ IV;

- ສະເໜີປະທານສໍານັກງານຄຸ້ມຄອງຕະຫຼາດຫຼັກຊັບ ເພື່ອສະເໜີຮັບຮອງເອົາບົດສະຫຼຸບການເຄື່ອນໄຫວຂອງຕະຫຼາດທຶນໄລຍະ 5 ປີ (2011-2015) ແລະ ແຜນການ 5 ປີ (2016-2020);

- ສໍາເລັດການລົງກວດກາປະຈໍາປີ 2015 ໂຮງຊວດຈໍາ ຈໍານວນໜຶ່ງ;

- ເປັນເຈົ້າພາບຈັດງານພົບປະ ແລະ ແລກປ່ຽນດ້ານວິຊາການ, ວັດທະນະທໍາ ແລະ ກິລາ ກັບ ທະນາຄານແຫ່ງລັດຫວຽດນາມ ທີ່ ສປປ ລາວ.

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ ສືບຕໍ່ເຂົ້າລາຍງານຕໍ່ກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ທີ່ຫ້ອງວ່າການສູນກາງພັກ, ❷ ຮ່ວມກອງປະຊຸມຄະນະລັດຖະບານສະໄໝວິສາມັນປະຈໍາເດືອນກັນຍາ 2016 ທີ່ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ❸ ເປັນປະທານກອງປະຊຸມວຽກງານ Basell 2, ❹ ເປັນປະທານກອງປະຊຸມປຶກສາຫາລືຄະນະຮັບຜິດຊອບກົດໝາຍວ່າດ້ວຍ ທະນາຄານທຸລະກິດ, ❺ ເປັນປະທານກອງປະຊຸມສະຫຼຸບການເຮັດວຽກ ກັບ IMF, ❻ ເຂົ້າຮ່ວມກອງປະຊຸມສະເໜີ ແລະ ປະກອບຄໍາເຫັນຕໍ່ກອງປະຊຸມລະຫວ່າງ ສະພາແຫ່ງຊາດ ສປປ ລາວ ຮ່ວມກັບ ສະພາແຫ່ງຊາດ ສສ. ຫວຽດນາມ, ❼ ໄປເຄື່ອນໄຫວວຽກງານທາງລັດຖະການຢູ່ທີ່ ສສ. ຫວຽດນາມ, ❽ ກະກຽມເນື້ອໃນ ແລະ ເຂົ້າຮ່ວມກອງປະຊຸມ EXCO SEACEN ທີ່ປະເທດຟີລິປິນ, ❾ ຮັບແຂກເຂົ້າພົບ ທ່ານ Omar ຜູ້ບໍລິຫານກຸ່ມ SEAVG;

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ສືບຕໍ່ລົງສໍາຫຼວດຖານະການລົງທຶນລະຫວ່າງປະເທດ (IIP Survey) ພາກສະໜາມ 3 ແຂວງພາກກາງ ແລະ 4 ແຂວງພາກໃຕ້;

- ສືບຕໍ່ກະກຽມການລົງທະບຽນຮັບນັກສຶກສາໃໝ່ສົກສຶກສາປີ 2016-2017 ແລະ ການມອບໃບປະກາສະນີຍາບັດໃຫ້ນັກສຶກສາທີ່ສໍາເລັດການສຶກສາ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ